

# ພົບກັບຄວາມສວຍງາມຂອງຈີນໃນເກມ “Black Myth: Wukong”

ຫວ່າງບໍ່ດົນມານີ້, ເກມ 3A ສະບັບທຳອິດຂອງຈີນ (ໂດຍທົ່ວໄປແລ້ວໝາຍເຖິງເກມຫຼິ້ນດ່ຽວທີ່ມີລາຄາແພງ, ຂະໜາດໃຫຍ່ ແລະ ມີຄຸນນະພາບສູງ) ເກມຫຼິ້ນດ່ຽວ “Black Myth: Wukong” ໄດ້ຮັບຄວາມນິຍົມຊົມຊອບທີ່ສຸດ ພາຍຫຼັງໄດ້ປ້ອນເຂົ້າຕະຫຼາດແລ້ວ, ມາຮອດເວລາ 21:00 ຂອງວັນທີ 23 ສິງຫາ 2024 ຕາມເວລາປັກກິ່ງ, ເກມແອັກຊັນສວມບົດບາດທີ່ຊອກຫາວັດຖຸດິບຈາກນະວະນິຍາຍອຳມະຕະເລື່ອງ “ໄຊອິວ” ຂອງຈີນ ມີຍອດຂາຍຫຼາຍກວ່າ 10 ລ້ານຊຸດ ໃນທຸກແພລດຟອມ ໂດຍມີຈຳນວນຜູ້ຫຼິ້ນເກມທາງອອນລາຍໃນເວລາດຽວກັນສູງສຸດ ຫຼາຍກວ່າ 3 ລ້ານຄົນ ໃນທຸກແພລດຟອມ.

ເກມ “Black Myth: Wukong” ບໍ່ພຽງແຕ່ເຮັດໃຫ້ວົງການເກມ ມີຄວາມຕື່ນເຕັ້ນຄຶກຄັກເທົ່ານັ້ນ, ແຕ່ຍັງເຮັດໃຫ້ສະຖາປັດຕະຍະກຳເກົ່າແກ່ຕ່າງໆຂອງຈີນ ໄດ້ຮັບຄວາມນິຍົມອີກດ້ວຍ. ໃນເກມ, ຈະເຫັນວ່າອາຄານຈີນບູຮານໃນສະຖານທີ່ຖ່າຍທຳ 36 ແຫ່ງນັ້ນ ມີຄວາມສວຍສົດງົດງາມປານີດ ແລະ ໜ້າເບິ່ງໜ້າຊົມອີ່ຫຼີ. ໃນພາກນີ້, ພວກເຮົາຈະຕິດຕາມຊຸນຫງໍ່ຄົງ (Wukong) ເຂົ້າໄປໃນຕຶກອາຄານບູຮານຂອງຈີນ ເພື່ອສຳຜັດກັບຄວາມຫຼາກຫຼາຍ ແລະ ຄວາມສວຍງາມຂອງວັດທະນະທຳຈີນ.

## ສຳຜັດກັບຄວາມສວຍງາມຂອງສະຖາປັດຕະຍະກຳຈີນ

“ຂ້ອຍໄດ້ຢືນຢັນແລ້ວວ່າ, ມັນເປັນອັນດຽວກັນເລີຍ.” ຫຼັງຈາກໄດ້ເດີນທາງໄປທ່ຽວແຂວງຊານຊີ (Shanxi), ມີຊາວເນັດບາງຄົນ ໄດ້ໂພສລົງໃນສື່ສັງຄົມອອນລາຍວ່າ ສະຖານທີ່ອັນສວຍງາມ ແລະ ສາກຕ່າງໆ ໃນເກມ “Black Myth: Wukong” ປານໄດ້ລອກແບບສະຖານທີ່ຕົວຈິງຕ່າງໆໃນແຂວງຊານຊີ.

ແຂວງຊານຊີ ຖືກເອີ້ນວ່າ “ຄັງສົມບັດສະຖາປັດຕະຍະກຳບູຮານຂອງຈີນ” ທີ່ມີຕຶກອາຄານເກົ່າແກ່ຫຼາຍກວ່າ 28.000 ຫຼັງ. ຕາມຂ່າວແຈ້ງວ່າ, ຕຶກອາຄານບູຮານຂອງແຂວງຊານຊີ ໄດ້ກວມເອົາສ່ວນໃຫຍ່ຂອງສະຖານທີ່ຕ່າງໆ ທີ່ຖ່າຍທຳເປັນສາກໃນເກມ. ເພື່ອພິສູດວ່າ: ສາກໃນເກມແມ່ນຄືກັນກັບອາຄານແທ້ຈິງຫຼືບໍ່ນັ້ນ, ນັກຫຼິ້ນເກມຫຼາຍຄົນຈຶ່ງໄດ້ພາກັນເດີນທາງໄປຫາຕຶກອາຄານບູຮານທີ່ຖືກຖ່າຍທຳໄວ້ໃນເກມເພື່ອຄົ້ນຫາຄຳຕອບ.

ທ່ານ ຫວັງສຽວຊິງ (Wang Xiaoqing) ເຈົ້າໜ້າທີ່ສື່ໃໝ່ຂອງແຫຼ່ງທ່ອງທ່ຽວ ຕຶກໄມ້ເມືອງອິງຊຽນ (Pagoda of Fogong Temple) ແຂວງຊານຊີ ແນະນຳໃຫ້ຮູ້ວ່າ: ໃນຖານະເປັນສະຖານທີ່ຖ່າຍທຳສາກເກມເລື່ອງ “Black Myth: Wukong”, ຈຳນວນນັກທ່ອງທ່ຽວ ທີ່ໄດ້ເດີນທາງມາທ່ຽວແຫຼ່ງທ່ອງທ່ຽວຕຶກໄມ້ເມືອງອິງຊຽນ ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ໂດຍມີນັກທ່ອງທ່ຽວປະມານ 14.000 ຫາ 15.000 ຄົນຕໍ່ມື້ ເຊິ່ງໄດ້ສ້າງສະຖິຕິໃໝ່ໃນປະຫວັດສາດ, ໃນນັ້ນນັກທ່ອງທ່ຽວໜຸ່ມກໍເພີ່ມຂຶ້ນຫຼາຍກວ່າ.

ເປັນທີ່ໜ້າສົນໃຈ ຄືເກມ “Black Myth: Wukong” ໄດ້ຖ່າຍທຳສາກຕ່າງໆຢູ່ສະຖານທີ່ 27 ແຫ່ງ ໃນແຂວງຊານຊີ ເຊິ່ງລວມທັງວັດແຂວນກາງພູ, ຄູຫາຢຸນກາງ ແລະ ວັດຊ້ານຮວາ ນະຄອນຕ້າຖົງ; ວັດໜານສານ (Nanchan) ແລະ ວັດເຢົາໂກ (Youguo) ນະຄອນຊິນໂຈ່ວ; ຕຶກໄມ້ເມືອງອິງຊຽນ ແລະ ວັດສິງຝູ ນະຄອນຊັວໂຈ່ວ (Shuozhou); ສານເຈົ້າກວນອູ (Guandi Temple at Xiezhou) ແລະ ຕຶກກ້ວນແຊ້ ນະຄອນຢຸນເສິງ; ວັດພະພຸດທະເຈົ້າເຫຼັກ ນະຄອນຈິນເສິງ ແລະ ວັດເກົ່າແກ່ແຫ່ງອື່ນໆ.

ປັດຈຸບັນ, ນອກຈາກແຂວງຊານຊີ ທີ່ໄດ້ຮັບຄວາມນິຍົມຊົມຊອບເປັນຢ່າງຍິ່ງແລ້ວ, ສະຖານທີ່ຖ່າຍທຳສາກແຫ່ງອື່ນໆ ໃນເກມ “Black Myth: Wukong” ກໍໄດ້ຮັບຄວາມສົນໃຈຢ່າງຫຼວງຫຼາຍອີກດ້ວຍ. ຄວາມນິຍົມໄປທ່ຽວພະທາດສາມອົງຂອງວັດສິງເຊີ້ງ ນະຄອນຕ້າຫຼີ ແຂວງຢຸນນານ ກໍໄດ້ເພີ່ມຂຶ້ນ 100% ແລະ ຄວາມນິຍົມໄປທ່ຽວ ແຫຼ່ງທ່ອງທ່ຽວແກະສະຫຼັກຫີນຕ້າຈູ ນະຄອນຈົ່ງກິ້ງ (Chongqing) ກໍໄດ້ເພີ່ມຂຶ້ນ 433%.



## ຟັງສຽງດົນຕີມ່ວນຫູຂອງຈີນ

ເກມທີ່ດີຈະຂາດດົນຕີທີ່ມ່ວນຫູບໍ່ໄດ້. ເກມ “Black Myth: Wukong” ໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ຫຼິ້ນເກມທັງຫຼາຍ, ການແຕ່ງດົນຕີໃຫ້ເກມ ກໍເປັນໜຶ່ງໃນປັດໄຈທີ່ສຳຄັນເປັນຂໍກະແຈເຊັ່ນດຽວກັນ.

ເພງເປີດລະຄອນໂທລະພາບເລື່ອງ “ໄຊອິວ” ສະບັບປີ 1986 ທີ່ພາດຫົວຂໍ້ “Yungong Xunyin” ແມ່ນຜົນງານເພງອຳມະຕະ ທີ່ປະສົມປະສານເຄື່ອງເສບດົນຕີພື້ນເມືອງຈີນ ແລະ ເຄື່ອງດົນຕີເອເລັກໂຕຼນິກຕາເວັນຕົກຢ່າງກົມກຽວກັນ ເຊິ່ງໄດ້ສ້າງຈິນຕະນາການທີ່ເໜືອຄວາມຄາດຄິດໃນພະລາດຊະວັງໂລກສະຫວັນ. ໃນເກມ, ບົດເພງ “Yungong Xunyin” ສະບັບປັບປຸງ ໄດ້ກາຍເປັນເພງສູ້ຊົນສຳລັບ “Wukong” ໃນຂະນະທີ່ຮັກສາຄວາມອຳມະຕະດັ້ງເດີມຂອງເພງ.

ໃນຂະນະທີ່ເກມ “Black Myth: Wukong” ໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ຫຼິ້ນເກມທັງຫຼາຍ, “ການເລົ່ານິທານທາງພາກເໜືອຂອງແຂວງສ້ານສີ (Shaanxi)” ກໍໄດ້ຮັບຄວາມນິຍົມຊົມຊອບເຊັ່ນດຽວກັນ. ສຽງເລົ່ານິທານດ້ວຍນ້ຳສຽງພາກເໜືອຂອງແຂວງສ້ານສີ, ບວກກັບພາບ ແລະ ໂຄງເລື່ອງຂອງເກມ ເຮັດໃຫ້ຜູ້ຫຼິ້ນເກມຕ່າງປະເທດຫຼາຍຄົນເວົ້າວ່າ: “ມັນໜ້າຕື່ນເຕັ້ນທີ່ສຸດ, ຍິ່ງຟັງຫຼາຍເທົ່າໃດກໍຍິ່ງຕິດໃຈນຳຫຼາຍເທົ່ານັ້ນ!”

ນອກຈາກສຽງດົນຕີປະກອບທີ່ກ່າວມາຂ້າງເທິງນີ້ແລ້ວ, ເມື່ອຕົວຢ່າງເກມຖືກເຜີຍແຜ່ອອກມາແລ້ວ, ສຽງ Rap ຈາກລຳຄຳໃນເກມ ເຮັດໃຫ້ຜູ້ຫຼິ້ນເກມຕ່າງປະເທດຕື່ນເຕັ້ນເປັນພິເສດ, ໂດຍໄດ້ໃຊ້ລີລາການຂັບຮ້ອງໃນລຳຄຳ ພ້ອມທັງໄດ້ປະກອບດ້ວຍສຽງຄ້ອງ ແລະ ສຽງດົນຕີອື່ນໆ, ເຕັມໄປດ້ວຍຄວາມລຶກລັບ ແລະ ພິທີກຳ ທີ່ເປັນເອກະລັກພິເສດຂອງຕາເວັນອອກ. ສຽງຮ້ອງຜູ້ຍິງທີ່ເຕັມໄປດ້ວຍຄວາມມີຊີວິດຊີວາ ແລະ ເຄັ່ງຂຶມ ໃນເພງປະກອບນັ້ນ ເປັນວິທີການຮ້ອງເພງແບບດັ້ງເດີມຢູ່ພາກໃຕ້ແຂວງຝູຈ້ຽນຈີນ. ຍັງມີເພງເກົ່າແກ່ ແລະ ອ່ອນຊອນ “Quit the Internet” ໃນເກມທີ່ມີເນື້ອຫາສາລະ ແລະ ທຳນອງທີ່ອ່ອນຊ້ອຍ ໄດ້ຖ່າຍທອດຄວາມຮູ້ສຶກທີ່ສະຫຼັບສັບຊ້ອນ ແລະ ໂລກໃນໃຈ ລະຫວ່າງຕົວລະຄອນເກມ.

ສິ່ງທີ່ຄວນເວົ້າເຖິງນັ້ນກໍຄື, ການເພີ່ມສີສັນງິ້ວ ແລະ ດົນຕີພື້ນເມືອງຂອງຈີນເຂົ້າໄປ ໄດ້ເຮັດໃຫ້ເກມມີບັນຍາກາດງິ້ວຫຼາຍຂຶ້ນ. ໂດຍປະສານສົມທົບສຽງແຫຼມສູງຂອງ ປີ່ຊິວນາຈີນ, ສຽງພິນຜີຜາ ທີ່ດັງກ້ອງກັງວານ ແລະ ສຽງຊຸ່ຍທີ່ເຄັ່ງຂຶມ, ເພງອຳມະຕະຂອງເລື່ອງ “ໄຊອິວ” ໄດ້ເຂົ້າເຖິງຈິດໃຈຂອງຄົນທັງຫຼາຍໄດ້ດີກວ່າເກົ່າ.

(ແຫຼ່ງຂ່າວ: ໜັງສືພິມລາຍວັນປັກກິ່ງ, CCTV ແລະອື່ນໆ); ພາບໂດຍ: ສຳນັກຂ່າວຊິນຮວາ

### ອ່ານເພີ່ມເຕີມ

ເລື່ອງ “ໄຊອິວ” ແມ່ນ 1 ໃນ 4 ນະວະນິຍາຍອຳມະຕະທີ່ມີຊື່ສຽງໂດ່ງດັງຂອງຈີນ ໄດ້ເລົ່າເລື່ອງຂອງພະຖັງຊຳຈັ໋ງ ນຳພາ ຊຸນຫງໍ່ຄົງ, ຕືໂປ໊ຍກ່າຍ ແລະ ຊົວເຈັ໋ງ ມຸ່ງໜ້າໄປສູ່ທິດຕາເວັນຕົກ ເພື່ອຮັບເອົາພຣະຄຳພີທາງພຸດທະສາສະໜາ, ຕ້ອງໄດ້ຜ່ານຄວາມທຸກທໍລະມານ 81 ຄັ້ງ ໃນການເດີນທາງ ແລະ ໃນທີ່ສຸດ ກໍໄດ້ຮັບພຣະຄຳພີທີ່ແທ້ຈິງ. ໃນນັ້ນ, ລະຄອນໂທລະພາບ ແລະ ຮູບເງົາ ທີ່ຖ່າຍທຳຕາມເນື້ອໃນເລື່ອງ “ໄຊອິວ” ມີຊື່ສຽງໂດ່ງດັງໃນປະເທດຈີນ, ໃນນັ້ນ, ພາບລັກຂອງ ຊຸນຫງໍ່ຄົງ ເປັນພະເອກທີ່ອຳມະຕະທີ່ສຸດ ແລະ ໄດ້ກາຍເປັນປັດໄຈແກນກາງຂອງເລື່ອງ “ໄຊອິວ” ໃນສະໄໝປັດຈຸບັນ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com